**LOWELL PUBLIC SCHOOLS**
ສຳນັກງານບໍລິຫານສ່ວນກາງ Henry J. Mroz
155 Merrimack Street
Lowell, MA 01852

ວັນທີ 5 ກຸມພາ 2021

ເຖິງບັນດານັກຮຽນ, ຄອບຄົວຂອງພວກເຂົາ ແລະ ເຈົ້າໜ້າທີ່ປະຈຳໂຮງຮຽນ Lowell Public Schools,

ຂ້າພະເຈົ້າຫວັງວ່າພວກທ່ານຄົງປອດໄພ ແລະ ສະບາຍດີ. ຂ້າພະເຈົ້າມີຄວາມຍິນດີທີ່ຈະລາຍງານວ່າ: ທິດທາງຫຼ້າສຸດຂອງຂໍ້ມູນກ່ຽວກັບພະຍາດອັກເສບປອດ ໂຄວິດ-19 (COVID-19) ຢູ່ທີ່ເມືອງ Lowell ແຫ່ງນີ້ ຊີ້ໃຫ້ເຫັນວ່າພວກເຮົາສາມາດບັນລຸເປົ້າໝາຍໃນການໃຫ້ນັກຮຽນກຸ່ມທຳອິດກັບເຂົ້າມາຮັບການສຶກສາພາຍໃນໂຮງຮຽນຫຼັງຈາກຊ່ວງພັກຮຽນໃນເດືອນກຸມພາ.

ດັ່ງນັ້ນ, ພວກເຮົາຈຶ່ງກຳລັງວາງແຜນໃຫ້ບັນດານັກຮຽນດັ່ງກ່າວເຫຼົ່ານັ້ນ ເຊິ່ງເຂົ້າຮຽນໃນໂປຣແກຣມການສຶກສາພິເສດທີ່ແຍກອອກຕ່າງຫາກຢ່າງສິ້ນເຊີງ - ທີ່ກ່ອນໜ້ານີ້ໄດ້ເຂົ້າຮ່ວມຮູບແບບການຮຽນການສອນໃນຫ້ອງຮຽນຂອງພວກເຮົາ - ກັບເຂົ້າມາທີ່ໂຮງຮຽນ ໂດຍເລີ່ມຕັ້ງແຕ່ວັນຈັນທີ 22 ກຸມພາ.

ພ້ອມດຽວກັນນັ້ນ, ພວກເຮົາກໍດຳເນີນງານໄປຕາມແຜນທີ່ວາງໄວ້ໃນການໃຫ້ນັກຮຽນກຸ່ມທີສອງຂອງພວກເຮົາກັບເຂົ້າມາຮັບການສຶກສາພາຍໃນໂຮງຮຽນໃນວັນຈັນທີ 1 ມີນາ - ບັນດານັກຮຽນເຫຼົ່ານັ້ນ ແມ່ນນັກຮຽນທີ່ບໍ່ໄດ້ຢູ່ໃນໂປຣແກຣມການສຶກສາພິເສດທີ່ແຍກອອກຕ່າງຫາກຢ່າງສິ້ນເຊີງ, ແຕ່ກ່ອນໜ້ານີ້ໄດ້ເຂົ້າຮັບການສຶກສາພາຍໃນຫ້ອງຮຽນໃນສົກຮຽນນີ້ ເຊິ່ງເປັນສ່ວນໜຶ່ງຂອງແຜນເປີດການຮຽນການສອນຄືນໃໝ່ສະບັບເດີມຂອງພວກເຮົາ.

ທຸກໆວັນພະຫັດ, Commonwealth (ເຄືອຈັກກະພົບ) ຈະເຜີຍແຜ່ແຜັດຟອມອອນລາຍກ່ຽວກັບຂໍ້ມູນຂອງພະຍາດອັກເສບປອດ ໂຄວິດ-19 (COVID-19) ໂດຍອີງຕາມຊຸມຊົນ. ລາຍງານປະຈຳອາທິດນີ້ສະແດງໃຫ້ເຫັນວ່າ: ອັດຕາການຕິດເຊື້ອພະຍາດອັກເສບປອດ ໂຄວິດ-19 (COVID-19) ທີ່ເມືອງ Lowell ແຫ່ງນີ້ມີການປັບປຸງດີຂຶ້ນຢ່າງຕໍ່ເນື່ອງ. ຈຳນວນຜູ້ຕິດເຊື້ອສະເລ່ຍລາຍວັນ ຕໍ່ພົນລະເມືອງ 100,000 ຄົນ ຕອນນີ້ແມ່ນຢູ່ທີ່ 63.2, ຫຼຸດລົງຈາກ 72.5 ໃນອາທິດທີ່ຜ່ານມາ, 87.0 ເມື່ອສອງອາທິດທີ່ຜ່ານມາ ແລະ ຫຼຸດລົງຕໍ່າຢ່າງຫຼວງຫຼາຍຖ້າທຽບກັບອັດຕາການຕິດເຊື້ອສະເລ່ຍລາຍວັນທີ່ 134.4 ໃນຊ່ວງກາງເດືອນທັນວາ. ໃນຂະນະທີ່ "ອັດຕາສ່ວນຮ້ອຍຂອງຜົນທົດສອບເປັນບວກ" (ເປີເຊັນຂອງການທົດສອບຫາເຊື້ອທີ່ມີຜົນເປັນບວກໃນເມືອງ Lowell ແຫ່ງນີ້) ຕອນນີ້ແມ່ນຢູ່ທີ່ 7.10, ຫຼຸດລົງຈາກ 8.37 ໃນອາທິດທີ່ຜ່ານມາ, 10.15 ເມື່ອສອງອາທິດທີ່ຜ່ານມາ ແລະ ຫຼຸດລົງຕໍ່າຫຼາຍຖ້າທຽບກັບ 12.33 ໃນຊ່ວງກາງເດືອນທັນວາ.

ບັນດາຄອບຄົວຂອງນັກຮຽນທີ່ໄດ້ຮັບການກຳນົດໃຫ້ກັບເຂົ້າໄປຮຽນໜັງສືພາຍໃນໂຮງຮຽນໃນວັນທີ 22 ກຸມພາ ຫຼື ວັນທີ 1 ມີນາ ແມ່ນຈະໄດ້ຮັບຂໍ້ມູນເພີ່ມເຕີມຈາກໂຮງຮຽນຂອງພວກເຂົາ. ນອກຈາກນີ້, ພວກເຮົາຍັງຈະຕິດຕໍ່ຫາໃນອາທິດໜ້າຜ່ານການສື່ສານຂອງເຂດການສຶກສາເຊິ່ງຈະໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບລະບົບການຂົນສົ່ງ, ຄວາມປອດໄພຕໍ່ກັບພະຍາດອັກເສບປອດ ໂຄວິດ-19 (COVID-19) ແລະ ການນຳໃຊ້ pool testing (ການທົດສອບເປັນກຸ່ມ) ທີ່ລັດເປັນຜູ້ອຸປະຖຳ ເພື່ອກວດຫາເຊື້ອພະຍາດອັກເສບປອດ ໂຄວິດ-19 (COVID-19).

ໃນລະຫວ່າງນີ້, ຖ້າຫາກລູກຂອງທ່ານບໍ່ໄດ້ເຂົ້າຮັບການສຶກສາພາຍໃນຫ້ອງຮຽນໃນຊ່ວງໃດໆກໍຕາມໃນສົກຮຽນນີ້ເລີຍ, ກະລຸນາສະຫຼະເວລາສອງສາມນາທີ ແລ້ວກອກຂໍ້ມູນໃສ່ແບບສຳຫຼວດນີ້ ເພື່ອປະເມີນຄວາມສົນໃຈຂອງທ່ານ, ຖ້າວ່າມີ, ເພື່ອໃຫ້ລູກຂອງທ່ານໄດ້ເຂົ້າຮ່ວມການຮຽນການສອນພາຍໃນຫ້ອງຮຽນພາຍຫຼັງສົກຮຽນນີ້. ວັນທີ 1 ເມສາ ກໍຍັງຄົງເປັນມື້ທີ່ພວກເຮົາກຳນົດໄວ້ໃນການຂະຫຍາຍການຮຽນການ

ສອນພາຍໃນຫ້ອງຮຽນໃຫ້ແກ່ນັກຮຽນເພີ່ມເຕີມນອກເໜືອຈາກບັນດານັກຮຽນທີ່ໄດ້ເຂົ້າຮັບການສຶກສາພາຍໃນໂຮງຮຽນເມື່ອຕົ້ນປີການສຶກສາຂອງສົກຮຽນນີ້.

ພວກເຮົາຍັງຄົງຢາກຂອບໃຈສຳລັບການໃຫ້ຄວາມຮ່ວມມື ແລະ ການປັບຕົວຂອງທ່ານຕະຫຼອດຊ່ວງວິກິດການດ້ານສຸຂະພາບທີ່ບໍ່ເຄີຍພົບພໍ້ມາກ່ອນເຊັ່ນນີ້ ແລະ ກໍຫວັງເປັນຢ່າງຍິ່ງວ່າຈະໄດ້ຕ້ອນຮັບນັກຮຽນກັບຄືນມາສູ່ໂຮງຮຽນໃນອະນາຄົດອັນໃກ້ນີ້.

ດ້ວຍຄວາມນັບຖື ແລະ ຮັກແພງ,



Dr. Joel D. Boyd
ຜູ້ບໍລິຫານໂຮງຮຽນ